**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

------===000===------


ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກນ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6


# ປະກາດ

**ເຖິງ:** ບັນດາຜູ້ຖືຮຸ້ນ ແລະ ນັກລົງທຶນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ.

**ເລື່ອງ:** ຫຼັກເກນ, ແນວທາງການຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ສໍາລັບການພິຈາລະນາຄັດເລືອກຕາມການປະຊຸມຜູ້ຖືຮຸ້ນ ປະຈໍາປີ 2025

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງກ່ຽວກັບຫຼັກເກນ, ແນວທາງການຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານຂອງບໍລິສັດ ສໍາລັບການພິຈາລະນາຄັດເລືອກຕາມການປະຊຸມຜູ້ຖືຮຸ້ນ ປະຈໍາປີ 2025 ເປັນດັ່ງນີ້:

## 1. ວັດຖຸປະສົງ

ເນື່ອງຈາກມີ ສະມາຊິກສະພາບໍລິຫານ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຄົບກໍານົດວາລະດໍາລົງຕໍາແໜ່ງ ຈຶ່ງຕ້ອງພິຈາລະນາແຕ່ງຕັ້ງທ່ານໃໝ່ທົດແທນ ດັ່ງນັ້ນບໍລິສັດຈຶ່ງມີຫຼັກເກນ ແລະ ແນວທາງໃນການຄັດເລືອກບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດທີ່ເໝາະສົມ ເພື່ອປະຕິບັດໜ້າທີ່ສະພາບໍລິຫານຂອງບໍລິສັດ.

## 2. ຫຼັກເກນ, ແນວທາງການຄັດເລືອກ ແລະ ຄຸນສົມບັດຂອງສະມາຊິກສະພາບໍລິຫານ ເປັນດັ່ງນີ້:

**2.1** ເພື່ອໃຫ້ສາມາດຄັດເລືອກສະມາຊິກສະພາບໍລິຫານທີ່ມີຄຸນສົມບັດເໝາະສົມກັບທຸລະກິດຂອງບໍລິສັດ

**2.2** ຍຶດຖືແນວທາງການຄັດເລືອກຕາມ Corporate Governance ຫລື CG

**2.3** ເພື່ອໃຫ້ຜູ້ທີ່ຈະເຂົ້າມາເປັນສະມາຊິກສະພາບໍລິຫານ ສາມາດເຂົ້າມາປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ

**2.4** ເພື່ອໃຫ້ຜູ້ຖືຫຸ້ນລາຍຍ່ອຍມີສ່ວນຮ່ວມໃນການນໍາສະເໜີຜູ້ທີ່ມີຄຸນສົມບັດເໝາະສົມເຂົ້າຮ່ວມການພິຈາລະນາຄັດເລືອກ

2.5 ເພື່ອໃຫ້ການຄັດເລືອກ ມີຄວາມໂປ່ງໃສ ເປັນທຳ

## 3. ແນວທາງການຄັດເລືອກຕາມ Corporate Governance ເພື່ອສົ່ງເສີມໃຫ້ເກີດ Board Effectiveness

**3.1** ພາລະບົດບາດຂອງສະມາຊິກສະພາບໍລິຫານ (The Role of The Board)

**3.2** ໂຄງສ້າງຂອງສະພາບໍລິຫານ (Composition / Board Structur) ປະກອບດ້ວຍ

1. Executive Directors
2. Non-Executive Directors
3. Non-Independent Directors
4. Independent Directors

**3.3** ຄຸນສົມບັດຂອງສະມາຊິກສະພາບໍລິຫານ (Board Membership)

1. Diversity
2. Development
3. Retirement

**3.4** ການເຮັດໜ້າທີ່ຂອງສະພາບໍລິຫານ (Board Process)

1. Information
2. Meeting
3. Decision Making

## 4. ພາລະບົດບາດຂອງສະມາຊິກສະພາບໍລິຫານ (The Role of the Board)

ສະມາຊິກສະພາບໍລິຫານ ຈະຕ້ອງມີບົດບາດ ແລະ ໜ້າທີ່ຢ່າງນ້ອຍດັ່ງນີ້:

1. Providing Accountability
2. Strategy Formulation
3. Policy Making
4. Monitoring & Supervising
5. Approve and work with and through the CEO




## 5. ໂຄງສ້າງຂອງສະພາບໍລິຫານ (Composition / Board Structure)

**5.1** ສະມາຊິກສະພາບໍລິຫານ (Board of Director) ມີຈຳນວນບໍ່ໜ້ອຍກວ່າ 5 ທ່ານ ແລະ ມີຕ້ອງມີສັດສ່ວນສະມາຊິກ ດັ່ງລຸ່ມນີ້:

- ສະມາຊິກອິດສະຫຼະ (Independent Director) ຢ່າງນ້ອຍ 1/3 ແລະ ຕ້ອງມີຄວາມຮູ້ທາງດ້ານບັນຊີ ແລະ ທາງດ້ານກວດສອບຢ່າງໜ້ອຍ 1 ທ່ານ
- ສະມາຊິກທີ່ມີສ່ວນຮ່ວມໃນການບໍລິຫານ (Executive Director) ບໍ່ເກີນ 1/3 ຂອງສະມາຊິກສະພາບໍລິຫານທັງໝົດ
- ສະມາຊິກທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ (Non-Executive Director) ບໍ່ເກີນ 1/3 ຂອງສະມາຊິກສະພາບໍລິຫານທັງໝົດ

**5.2** ໂຄງສ້າງສະພາບໍລິຫານ ແບ່ງຕາມຕໍ່າແໜ່ງໜ້າທີ່ ເປັນດັ່ງນີ້:

| | | | |
|---|---|---|---|
| - ປະທານສະພາບໍລິຫານ | ຈຳນວນ | 1 | ທ່ານ |
| - ຮອງປະທານສະພາບໍລິຫານ | ຈຳນວນ | 1 | ທ່ານ |
| - ກຳມະການ | ຈຳນວນ | 7 | ທ່ານ |
| ○ ທັງໝົດ | ຈຳນວນ | 9 | ທ່ານ |

## 6. ຄຸນສົມບັດຂອງສະມາຊິກສະພາບໍລິຫານ ( Board Membership )

ຄະນະກຳມະການຄັດເລືອກກຳນົດຄຸນສົມບັດຂອງສະມາຊິກສະພາບໍລິຫານທີ່ຖືກຕ້ອງບໍ່ມີລັກສະນະຕ້ອງຫ້າມຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ແລະ

ຂໍ້ຕົກລົງວ່າດ້ວຍສະພາບໍລິຫານ ສະບັບເລກທີ 10/ຄຄຊ, ລົງວັນທີ 26 ເມສາ 2019 ແລະກົດໝາຍທີ່ກ່ຽວຂ້ອງອື່ນໆ

ຄະນະກຳມະການຄັດເລືອກກຳນົດຄຸນສົມບັດພື້ນຖານຂອງສະມາຊິກສະພາບໍລິຫານມີຄວາມຮູ້ຄວາມສາມາດເໝາະສົມ ກັບທຸລະກິດຂອງບໍລິສັດຕາມ Specialist ໂດຍຖືຕາມ Knowledge, Skill, Experience ທີ່ສະມາຊິກໃນສະພາບໍລິຫານໂດຍລະບຸຄວາມຮູ້ຄວາມສາມາດເປັນ 2 ລະດັບຄື:

**6.1** ມີຄວາມຮູ້ຄວາມສາມາດເໝາະສົມກັບທຸລະກິດ ຕາມຄຸນສົມບັດພື້ນຖານ Specialist ທີ່ຈຳເປັນຕ້ອງມີ (must have) ໄດ້ແກ່:

- **a.** ຄວາມຮູ້ຄວາມຊຳນານກ່ຽວກັບທຸລະກິດເຊົ່າສິນເຊື່ອ (Leasing Business)
- **b.** ດ້ານການເງິນການທະນາຄານ (Finance and Banking)
- **c.** ດ້ານບັນຊີ ແລະ ກວດສອບ (Accounting and Auditing)
- **d.** ກົນລະຍຸດທາງການຕະຫຼາດ ແລະ ການຍຸດທະສາດການແຂ່ງຂັນ (Marketing and Strategy)
- **e.** ດ້ານເທັກໂນໂລຢີການສື່ສານ ແລະ ນະວັດຕະກຳ (Intelligent Technology and Innovation)
- **f.** ດ້ານປະຕິບັດການ (Operation)
- **g.** ດ້ານກົດໝາຍ (Legal)

**6.2** ຄຸນສົມບັດພື້ນຖານຕາມ Specialist ທີ່ຄວນຈະມີ (should have) ໄດ້ແກ່:

- **a.** ການບໍລິຫານຄວາມສ່ຽງ (Risk Management)
- **b.** ເສດຖະກິດມະຫາພາກ ແລະ ຈຸລະພາກ (Macro and Micro Economic)
- **c.** ບໍລິຫານງານບຸກຄະລາກອນ (Human Resources)
- **d.** ມີຄວາມຮູ້ກ່ຽວກັບດ້ານເຕັກນິກທຸລະກິດຍານພະຫະນະ, ເຄື່ອງກະສິກຳ, ຄຳ, ອຸປະກອນເຄື່ອງໃຊ້ໄຟຟ້າ ແລະ ອື່ນ (Vehicle, Agricultural equipment, Gold, Electric appliance and others mechanism or business)
- **e.** ທະຫານ/ຕຳຫຼວດ (Sodlier/Police)

## 7. ຂະບວນການຄັດເລືອກສະມາຊິກສະພາບໍລິຫານ (Nomination Process)

ຄະນະກຳມະການຄັດເລືອກກຳນົດຂັ້ນຕອນໃນການຄັດເລືອກໄວ້ດັ່ງນີ້:

**7.1** ຄະນະກຳມະການຄັດເລືອກພິຈາລະນາຫຼັກເກນທີ່ເໝາະສົມ ໂດຍປະກາດໃຫ້ຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືຮຸ້ນລວມກັນທັງໝົດຕັ້ງແຕ່ 5% ຂຶ້ນໄປມີສ່ວນຮ່ວມໃນການສະເໜີລາຍຊື່ candidate ນີ້ດ້ວຍ ໂດຍຕ້ອງສະເໜີຊື່ລະຫວ່າງວັນທີ 1-15 ທັນວາ 2025 ເພື່ອໃຫ້ຄະນະກຳມະການຄັດເລືອກພິຈາລະນາຕໍ່ໄປ

**7.2** ຄະນະກຳມະການຄັດເລືອກ ລວບລວມ, ຊອກຫາ ແລະ ກວດສອບຄຸນສົມບັດຂອງ candidate

**7.3** ຄະນະກຳມະການຄັດເລືອກຈັດແບ່ງລາຍຊື່ candidate ແຍກຕາມຄຸນສົມບັດພື້ນຖານຕາມຂໍ້ 6

**7.4** ຄະນະກຳມະການຄັດເລືອກ ດຳເນີນການຄັດເລືອກສະມາຊິກສະພາບໍລິຫານທີ່ເໝາະສົມເພື່ອສະເໜີໃຫ້ສະພາບໍລິຫານພິຈາລະນາກ່ອນ ແລະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ

## 8. ເລື່ອງອື່ນໆ

**8.1** ຂັ້ນຕອນໃນການພິຈາລະນາ ຄືກັບການພິຈາລະນາຄະນະກຳມະການຄັດເລືອກ ປະຕິບັດຕາມແນວທາງຂ້າງຕົ້ນ ຫາກມີຂໍ້ປະຕິບັດອື່ນໆ ມອບໃຫ້ຄະນະກຳມະການຄັດເລືອກເປັນຜູ້ພິຈາລະນາ ແລະ ຕັດສິນໄດ້ໂດຍອິດສະລະ ຫຼື ປັບປຸ່ງນສິທິການໄດ້ຕາມຄວາມເໝາະສົມ ແລະ ຕາມສະຖານະການໄດ້

**8.2** ການຄັດເລືອກສະມາຊິກສະພາບໍລິຫານໃຫ້ເປັນໄປຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທີ່ກຳນົດຂື້ນໃນແຕ່ລະໄລຍະເວລາ

## 9. ໄລຍະເວລາ

ບໍລິສັດ ຈະດຳເນີນການຄັດເລືອກສະມາຊິກສະພາບໍລິຫານທີ່ມີຄຸນສົມບັດເໝາະສົມ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງ ພາຍໃນວັນທີ 31 ມີນາ 2026

ນະໂຍບາຍສະບັບນີ້ ໄດ້ຜ່ານການພິຈາລະນາ ແລະ ອະນຸມັດຈາກສະພາບໍລິຫານແລ້ວຕາມການປະຊຸມສະພາບໍລິຫານ ຄັ້ງທີ 6 ປີ 2025 ວັນທີ 06 ພະຈິກ 2025

ລົງປະກາດ ວັນທີ 27 ພະຈິກ 2025

**ຜູ້ອຳນວຍການ**

ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

**(ທ່ານ ມານິບ ຕຣີລິດວິໄລ)**